**ບົດປາໄສ**
**ຂອງພະນະທ່ານ ທອງສິງ ທຳມະວົງ**
**ນາຍົກລັດຖະມົນຕີແຫ່ງ ສປປ ລາວ ກ່າວໄຂກອງປະຊຸມໂຕະມົນລະດັບສູງ ຄັ້ງທີ 11**
**ນະຄອນຫຼວງວຽງຈັນ, ວັນທີ 19 ພະຈິກ 2013**
**---------------**

- *ບັນດາທ່ານ ທີ່ມີກຽດ,*
- *ທ່ານ ຍິງ ແລະ ທ່ານ ຊາຍ ທີ່ນັບຖື ແລະ ຮັກແພງທັງຫຼາຍ,*

ໃນນາມລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຂ້າພະເຈົ້າ ຂໍສະແດງຄວາມຍິນດີຕ້ອນຮັບທຸກໆທ່ານ, ພິເສດແມ່ນ ທ່ານ ຮາວລຽງ ຊູ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນຫົວໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ສຳລັບຂົງເຂດພາກພື້ນອາຊີ-ປາຊີຟິກ, ທີ່ໄດ້ໃຫ້ຄວາມສຳຄັນ ແລະ ໃຫ້ກຽດເຂົ້າຮ່ວມກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ທີ່ ນະຄອນຫຼວງວຽງຈັນ ໃນມື້ນີ້.

ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈມາຍັງ ອົງການສະຫະປະຊາຊາດ ເພື່ອການພັດທະນາ ກໍ່ຄື ອົງການເຄືອຂ່າຍສະຫະປະຊາຊາດ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຮ່ວມມືຢ່າງໃກ້ຊິດ ກັບບັນດາຂະແໜງການ ທີ່ກ່ຽວຂ້ອງຂອງລັດຖະບານ ໃນການກະກຽມ ແລະ ດຳເນີນກອງປະຊຸມໃນຄັ້ງນີ້.

ກອງປະຊຸມໂຕະມົນລະດັບສູງປີນີ້, ໄດ້ໝູນວຽນມາຄົບຮອບອີກວາລະໜຶ່ງ ເຊິ່ງພາຍຫຼັງໄດ້ຈັດກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 10 ຂຶ້ນໃນປີ 2010 ທີ່ຜ່ານມາ. ຈາກໝາກຜົນຂອງກອງປະຊຸມດັ່ງກ່າວ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 7 (2011-2015) ມາຮອດປະຈຸບັນ ເຊິ່ງເປັນໄລຍະກາງສະໄໝຂອງການຈັດຕັ້ງປະຕິບັດແຜນດັ່ງກ່າວ, ເຫັນວ່າ ມີຄວາມຄືບໜ້າ ແລະ ມີຜົນສຳເລັດໃນຫຼາຍດ້ານ ເຊິ່ງສະແດງອອກ ເຊັ່ນ: ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມ ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດຂອງລາວ ໄດ້ມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນສະເລ່ຍ 3 ປີ ບັນລຸ 8,2%, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ, ອັດຕາຄວາມທຸກຍາກ ໄດ້ຫຼຸດລົງຈາກ 27,6% ໃນສົກປີ 2007-2008 ມາເປັນ 20,5% ໃນສົກປີ 2012-2013.

ຄຽງຄູ່ກັນນັ້ນ ລັດຖະບານ ກໍ່ໄດ້ເອົາໃຈໃສ່ປະຕິບັດທິດນຳ 3 ສ້າງ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນຫົວໜ່ວຍພັດທະນາ, ເຊິ່ງຈຸດປະສົງຂອງວຽກງານດັ່ງກ່າວ ແມ່ນເພື່ອມອບຄວາມຮັບຜິດຊອບຂຸດຄົ້ນຂີດຄວາມສາມາດ ແລະ ທ່າແຮງຂອງທ້ອງຖິ່ນ ໂດຍສະເພາະ ບັນດາແຂວງ, ເມືອງ ແລະ ບ້ານເປົ້າໝາຍແນໃສ່ສ້າງການຫັນປ່ຽນໃໝ່ ໃຫ້ສາມາດລຶບລ້າງຄວາມທຸກຍາກຂອງປະຊາຊົນ ໃຫ້ໄດ້ໃນລະດັບໃດໜຶ່ງທີ່ແນ່ນອນ.

ສຳລັບການຈັດຕັ້ງປະຕິບັດເປົ້າໝາຍ ສະຫັດສະຫວັດດ້ານພັດທະນາ ກໍ່ມີຄວາມຄືບໜ້າ ແລະ ມີທ່າອ່ຽງບັນລຸໄດ້ <u>ເປົ້າໝາຍທີ່ 3:</u> ຄວາມສະເໝີພາບ ລະຫວ່າງຍິງຊາຍ, <u>ເປົ້າໝາຍທີ່ 6:</u> ການຕ້ານໂລກເອດ, ວັນນະໂລກ ແລະ ໄຂ້ຍຸງ, <u>ເປົ້າໝາຍທີ່ 7:</u> ວຽກງານດ້ານສິ່ງແວດລ້ອມ ແລະ <u>ເປົ້າໝາຍທີ່ 8:</u> ການສ້າງຄູ່ຮ່ວມ ເພື່ອການພັດທະນາ.

ຜົນສຳເລັດທີ່ກ່າວມານັ້ນ ແມ່ນຄວາມບຸກບືນພະຍາຍາມ ແລະ ຄວາມຕື່ນຕົວເປັນເຈົ້າການຂອງທົ່ວປວງຊົນລາວ ບວກກັບການດຳເນີນນະໂຍບາຍສົ່ງເສີມຄວາມສະເໝີພາບ ແລະ ບົດບາດຂອງບັນດາພາກສ່ວນເສດຖະກິດ ເຂົ້າໃນການພັດທະນາຢ່າງແຂງແຮງ; ສິ່ງສຳຄັນອີກອັນໜຶ່ງ, ກໍ່ຍ້ອນການສະໜັບສະໜູນຊ່ວຍເຫຼືອທາງດ້ານທຶນຮອນ ແລະ ວິຊາການ ຢ່າງເປັນປົກກະຕິຕໍ່ເນື່ອງ ຂອງບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ເວົ້າລວມ ກໍ່ແມ່ນບັນດາຄູ່ຮ່ວມພັດທະນາຕ່າງໆ.

ໃນນາມລັດຖະບານ ແລະ ປະຊາຊົນລາວ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງຈິງໃຈ ຕໍ່ການສະໜັບສະໜູນຊ່ວຍເຫຼືອທີ່ມີໝາກມີຜົນດັ່ງກ່າວ ມາໃນນະໂອກາດນີ້ດ້ວຍ.

*ບັນດາທ່ານ ທີ່ມີກຽດ,*
*ທ່ານຍິງ ແລະ ທ່ານຊາຍ.*

ໃນຄວາມເປັນຈິງແລ້ວ, ເຖິງແມ່ນວ່າ ສປປ ລາວ ພວກຂ້າພະເຈົ້າ ຈະສາມາດປະຕິບັດວຽກງານ ແລະ ໄດ້ມີຜົນສຳເລັດໃນດ້ານຕ່າງໆກໍ່ຕາມ. ແຕ່ກໍ່ບໍ່ປາສະຈາກໄດ້ ບັນດາຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ອັນເນື່ອງມາຈາກສະພາບເງື່ອນໄຂການພັດທະນາ ຢູ່ພາຍໃນປະເທດ ລວມທັງ ສະພາບການປ່ຽນແປງຂອງດິນຟ້າອາກາດ ເຊິ່ງໄດ້ເກີດອຸທົກກະໄພ (ນ້ຳຖ້ວມ, ນ້ຳໄຫຼຊຸ) ຢູ່ບັນດາແຂວງພາກເໜືອ, ພາກກາງ ແລະ ພາກໃຕ້. ຜົນກະທົບດັ່ງກ່າວ ໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ, ຊັບສິນ ແລະ ການພັດທະນາເສດຖະກິດ ແລະ ພື້ນຖານໂຄງລ່າງ ຢູ່ໃນທ້ອງຖິ່ນດັ່ງກ່າວ ເປັນຈຳນວນບໍ່ໜ້ອຍ.

ນອກຈາກນີ້, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2012-2013 ນີ້ ຍັງມີບາງຄາດໝາຍເສດຖະກິດມະຫາພາກ ອາດຈະບໍ່ສາມາດປະຕິບັດໄດ້ຕາມແຜນ ເຊັ່ນ: ການຂາດດຸນດ້ານລາຍຮັບ-ລາຍຈ່າຍງົບປະມານ, ສາເຫດ ແມ່ນຍ້ອນການເບີກຈ່າຍເງິນອຸດໜູນຄ່າຄອງຊີບຕະຫຼອດປີ ບວກກັບການເພີ່ມດັດສະນີເງິນເດືອນ ແລະ ເງິນອຸດໜູນວິຊາຊີບຕ່າງໆ ໄດ້ເຮັດໃຫ້ລາຍຈ່າຍຮ່ວງເງິນເດືອນ ແລະ ເງິນອຸດໜູນ ເພີ່ມຂຶ້ນ 100 ກ່ວາ % ໃນຂະນະທີ່ລາຍຮັບງົບປະມານປົກກະຕິ ເພີ່ມຂຶ້ນພຽງແຕ່ 20% ເທົ່ານັ້ນ.

ສຳລັບການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫັດ ດ້ານການພັດທະນາ ເຫັນວ່າຍັງມີບາງຄາດໝາຍທີ່ຈະຕ້ອງໄດ້ໃຊ້ຄວາມພະຍາຍາມ ແລະ ສຸມທຶນຮອນເຂົ້າໃສ່ ເພື່ອແນໃສ່ປະຕິບັດບາງຄາດໝາຍທີ່ຍັງມີຄວາມທ້າທາຍ ເຊັ່ນ: <u>ເປົ້າໝາຍທີ່ 1:</u> ວຽກງານໂພຊະນາການ ໂດຍສະເພາະແມ່ນການຂາດສານອາຫານຂອງເດັກ ອາຍຸລຸ່ມ 5 ປີ ແລະ ລວງສູງ ຕ່ຳກ່ວາມາດຖານ; <u>ເປົ້າໝາຍທີ່ 2:</u> ອັດຕາການລອດເຫຼືອຂອງນັກຮຽນຊັ້ນປະຖົມ ຍັງຕ່ຳ, ອັດຕາການປະລະ ແລະ ຄ້າງຫ້ອງຂອງນັກຮຽນປີ 1 ແລະ ປີ 2 ຍັງສູງ; <u>ເປົ້າໝາຍທີ່ 5:</u> ອັດຕາການຕາຍຂອງແມ່ ຍັງສູງ ຖ້າທຽບໃສ່ລະດັບພາກພື້ນ; <u>ເປົ້າໝາຍທີ່ 9:</u> ລະເບີດ ບໍ່ທັນແຕກ ຍັງມີຫຼາຍໃນທົ່ວທຸກພາກຂອງປະເທດ ແລະ ຍັງຈະສືບຕໍ່ເປັນໄພຄຸກຄາມ ຕໍ່ການພັດທະນາ ກໍ່ຄືຊີວິດການເປັນຢູ່ຂອງປະຊາຊົນໃນທົ່ວປະເທດ.

ຕໍ່ບັນຫາດັ່ງກ່າວ, ລັດຖະບານ ສປປ ລາວ ຈະໄດ້ເອົາໃຈໃສ່ຊອກຫາວິທີທາງ ແລະ ມາດຕະການແກ້ໄຂ ໂດຍສຸມໃສ່ຈັດຕັ້ງປະຕິບັດແຜນການໃນຕໍ່ໜ້າ ດັ່ງນີ້:

1) ສືບຕໍ່ຊຸກຍູ້ເຮັດໃຫ້ເສດຖະກິດ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ຮັບປະກັນຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ ໂດຍຮັກສາອັດຕາການເຕີບໂຕ ໃຫ້ຢູ່ໃນລະດັບ 8% ຂຶ້ນໄປ, ໃນນັ້ນເອົາໃຈໃສ່ຫັນປ່ຽນໂຄງປະກອບເສດຖະກິດ ຈາກການຜະລິດກະສິກຳ-ປ່າໄມ້ ແບບປະຖົມປະຖານ ໄປສູ່ການຜະລິດແບບອຸດສາຫະກຳ ແລະ ທັນສະໄໝ, ສືບຕໍ່ຄຸ້ມຄອງອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບຕໍ່າກ່ວາການຂະຫຍາຍຕົວເສດຖະກິດ ແລະ ໃຫ້ປະລິມານເງິນ (M2) ເພີ່ມຂຶ້ນໃນລະດັບທີ່ເໝາະສົມ ທຽບໃສ່ປີທີ່ຜ່ານມາ, ຮັບປະກັນຄັງສຳຮອງ ທີ່ເປັນເງິນຕາຕ່າງປະເທດໃຫ້ກຸ້ມການນຳເຂົ້າແຕ່ 5 ເດືອນຂຶ້ນໄປ, ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ, ເອົາໃຈໃສ່ຊຸກຍູ້ການເກັບລາຍຮັບ ໃຫ້ແຂງແຮງ ດ້ວຍການປັບປຸງລະບົບກົນໄກການຈັດເກັບລາຍຮັບຈາກແຫຼ່ງໃໝ່ ໃຫ້ເພີ່ມຂຶ້ນ ເພື່ອທົດແທນງົບປະມານທີ່ຈະຂາດດຸນ ແລະ ຮັກສາອັດຕາການຂາດດຸນງົບປະມານ ໃຫ້ຢູ່ໃນລະດັບທີ່ເໝາະສົມ, ຮັກສາແຜນລາຍຈ່າຍງົບປະມານ ຕາມການຮັບຮອງຂອງສະພາແຫ່ງຊາດໃນແຕ່ລະໄລຍະ, ເອົາໃຈໃສ່ຄຸ້ມຄອງ ຂະແໜງພາສີ-ອາກອນ ແລະ ຂະແໜງເກັບລາຍຮັບອື່ນໆ ໃຫ້ຮັດກຸມ, ເພີ່ມທະວີການປະຕິບັດວິໄນທາງການເງິນຢ່າງເຂັ້ມງວດ, ສືບຕໍ່ຄົ້ນຄ້ວາປະຕິບັດມາດຕະການປະຢັດແຫ່ງຊາດ ແລະ ໂຄສະນາອົບຮົມໃຫ້ທົ່ວສັງຄົມ ຈັດຕັ້ງປະຕິບັດ.

2) ເອົາໃຈໃສ່ຕ້ານທຸກປະກົດການຫຍໍ້ທໍ້ໃນສັງຄົມ, ສ້າງສັງຄົມ ທີ່ປອດໃສຂາວສະອາດ, ສີວິໄລ ແລະ ຍຸຕິທຳ; ເອົາໃຈໃສ່ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລະບຽບກົດໝາຍຢ່າງເຂັ້ມງວດ.

3) ໃນດ້ານການແກ້ໄຂຄວາມທຸກຍາກ ທີ່ຕິດພັນກັບການພັດທະນາຊົນນະບົດ, ພວກເຮົາ ຈະສຸມກຳລັງເຂົ້າໃສ່ເພື່ອໃຫ້ປະຊາຊົນ ມີວຽກເຮັດງານທຳ, ມີອາຊີບທີ່ໝັ້ນຄົງ, ດຳເນີນການຜະລິດຢ່າງກ້ວາງຂວາງ ແລະ ສ້າງເງື່ອນໄຂໃຫ້ຊົນນະບົດ ໄດ້ຮັບການພັດທະນາ ແນໃສ່ຫຼຸດຜ່ອນຄວາມແຕກໂຕນດ້ານການພັດທະນາ ແລະ ລະດັບຊີວິດການເປັນຢູ່ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ ໃຫ້ຫຼຸດລົງເທື່ອລະກ້າວ.

4) ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ ໃຫ້ຕອບສະໜອງກັບການພັດທະນາເສດຖະກິດ-ສັງຄົມ, ກັບການເຊື່ອມໂຍງພາກພື້ນ ແລະ ສາກົນ, ເຊິ່ງໃນນີ້ ຈະສືບຕໍ່ເອົາໃຈໃສ່ວຽກງານອາຊີວະສຶກສາ ພ້ອມທັງສ້າງແຮງງານ ທີ່ມີສີມື-ມີຄຸນນະພາບ ສາມາດຕອບສະໜອງໃຫ້ແກ່ໂຄງການລົງທຶນຂະໜາດໃຫຍ່ ແລະ ຕະຫຼາດແຮງງານ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ ເພື່ອຮອງຮັບການເຂົ້າເປັນສະມາຊິກ ປະຊາຄົມເສດຖະກິດອາຊຽນ (AEC) ໃນປີ 2015 ຢ່າງມີຜົນສຳເລັດ.

5) ດ້ານການປົກປັກຮັກສາສິ່ງແວດລ້ອມ ຈະສືບຕໍ່ຊອກຫາວິທີທາງ ແລະ ມາດຕະການເພື່ອປ້ອງກັນ ແລະ ແກ້ໄຂບັນຫາຜົນກະທົບຈາກໄພພິບັດທາງທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ.

*ບັນດາທ່ານ ທີ່ຮັກແພງ,*

ສຳລັບທິດທາງແຜນການໃນຕໍ່ໜ້າ ຂອງ ສປປ ລາວ, ເຫັນວ່າ ຍັງມີຫຼາຍບັນຫາ ທີ່ຈະຕ້ອງໄດ້ປຶກສາຫາລືກັນລະອຽດ ແລະ ຈະໄດ້ຈັດຕັ້ງປະຕິບັດຢ່າງທັນການ. ສະນັ້ນ, ຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນ ຈົ່ງໃຫ້ການສະໜັບສະໜູນ, ຮ່ວມມື ແລະ ປະກອບສ່ວນຕາມພາລະບົດບາດ, ຄວາມສາມາດ ແລະ ຄວາມຮັບຜິດຊອບຂອງຕົນ. ເພື່ອບັນລຸຜົນສຳເລັດຄືແນວນັ້ນ ດ້ານໜຶ່ງມັນຮຽກຮ້ອງໃຫ້ມີທຶນສຳລັບການຈັດຕັ້ງປະຕິບັດ, ເຊິ່ງຄວາມຕ້ອງການ ແລະ ຄາດຄະເນທຶນຮອບລວມ ແຕ່ນີ້ຮອດປີ 2015 ແມ່ນ 1,220 ລ້ານໂດລາສະຫະລັດ ສຳລັບວຽກງານການລົງທຶນ ແລະ 400 ລ້ານໂດລາສະຫະລັດ ສຳລັບວຽກງານການສ້າງຂີດຄວາມສາມາດດ້ານວິຊາການ. ພ້ອມດຽວກັນນັ້ນ, ພວກເຮົາຍັງຕ້ອງການທຶນຮອນເພີ່ມຕື່ມອີກຫຼາຍກ່ວາ 300 ລ້ານໂດລາສະຫະລັດ ຕໍ່ປີ ເພື່ອເລັ່ງລັດຈັດຕັ້ງປະຕິບັດບັນດາເປົ້າໝາຍສະຫັດສະຫວັດດ້ານພັດທະນາ ໂດຍສະເພາະເປົ້າໝາຍທີ່ຍັງປະຕິບັດບໍ່ໄດ້ຕາມຄາດໝາຍ. ສະນັ້ນ, ສປປ ລາວ ຈຶ່ງມີຄວາມຈຳເປັນ ໃນການສືບຕໍ່ລະດົມທຶນຊ່ວຍເຫຼືອ ຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ກໍ່ຄື ຄູ່ຮ່ວມພັດທະນາຕ່າງໆ.

*ບັນດາທ່ານ ທີ່ມີກຽດ,*

ນອກຈາກ ຈະຕ້ອງໄດ້ສຸມໃສ່ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VII ໃຫ້ບັນລຸໝາກຜົນແລ້ວ, ລັດຖະບານ ຍັງຈະໄດ້ກຳນົດທິດທາງໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 8 (2016-2020) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ສາມາດເປັນແຜນ ຮັບໃຊ້ໃຫ້ແກ່ການນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບ ການເປັນປະເທດດ້ອຍພັດທະນາພາຍໃນປີ 2020. ດັ່ງນັ້ນ, ລັດຖະບານ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ຈະຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ ກໍ່ຄືພັນທະຂອງຕົນ ດ້ວຍຄວາມຮັບຜິດຊອບສູງ.

ອີກເທື່ອໜຶ່ງ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ຕໍ່ການສະໜັບສະໜູນຊ່ວຍເຫຼືອ ຂອງບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ກໍ່ຄືບັນດາຄູ່ຮ່ວມພັດທະນາຕ່າງໆ ເຊິ່ງເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VII ແລະ ການບັນລຸເປົ້າໝາຍ MDGs.

ໃນນາມລັດຖະບານ, ຂ້າພະເຈົ້າ ຂໍຢືນຢັນກ່ຽວກັບຄວາມໝັ້ນໝາຍຂອງຕົນ ທີ່ຈະໃຫ້ການຮ່ວມມື ແລະ ຈະຍົກສູງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ມີຄວາມໂປ່ງໃສ, ມີປະສິດທິຜົນ, ມີຄວາມຍືນຍົງ ແລະ ໄປຮອດໄປເຖິງປະຊາຊົນຢ່າງແທ້ຈິງ.

ດ້ວຍໄມຕີຈິດ ແລະ ດ້ວຍມູນເຊື້ອການຮ່ວມມືທີ່ດີ ລະຫວ່າງ ສປປ ລາວ ກັບບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ກໍ່ຄືຄູ່ຮ່ວມພັດທະນາຕ່າງໆ, ຂ້າພະເຈົ້າເຊື່ອວ່າ ກອງປະຊຸມ ໂຕະມົນຄັ້ງນີ້ ຈະດຳເນີນໄປດ້ວຍບັນຍາກາດອັນສ້າງສັນ ແລະ ມີຜົນສຳເລັດທີ່ຈົບງາມ.

ຂໍອວຍພອນໃຫ້ ທ່ານ ຮາວລຽງ ຊູ ແລະ ບັນດາທ່ານ ທ່ານຍິງ ແລະ ທ່ານຊາຍ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ມີຄວາມຜາສຸກ.

ມາຮອດນີ້, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ຢ່າງເປັນທາງການ.

ຂໍຂອບໃຈ.